# ການປູກເຫັດໃສ່ທ່ອນໄມ້

## ບົດນຳ

ການປູກເຫັດໃສ່ທ່ອນໄມ້ນີ້ ມີຂັ້ນຕອນງ່າຍກວ່າ ການປູກເຫັດໃນຖົງຢາງພາລາສຕິກ. ເຊິ່ງກໍ່ມີຊະນິດໄມ້ເນື້ອອ່ອນຫຼາຍຊະນິດທີ່ສາມາດປູກເຫັດໃສ່ໄດ້ ແລະ ຍັງໃຫ້ຜົນຜະລິດດີອີກດ້ວຍດັ່ງວິທີການລຸ່ມນີ້:

## ການກະກຽມ

**1. ວັດຖຸອຸປະກອນ**

- ທ່ອນໄມ້ຍາວ 1.20 ແມັດ
- ສະຫວ່ານ, ຊິ່ວ, ຄ້ອນສຳລັບເຈາະຮູ
- ຊາມສຳລັບໃສ່ຫົວເຊື້ອ
- ຂີ້ເຜີ້ງສຳລັບອັດຮູທີ່ໃສ່ຫົວເຊື້ອແລ້ວ
- ບ່ວງສຳລັບຕັກຫົວເຊື້ອ



ຮູບ: ຄ້ອນສຳລັບເຈາະຮູ



ຮູບ: ສະຫວ່ານສຳລັບເຈາະຮູ

**2. ໄມ້ສຳລັບໃຊ້ປູກທີ່ໄດ້ຜົນ**

ມີໄມ້ເນື້ອອ່ອນ ແລະ ໄມ້ເນື້ອແຂງບາງຊະນິດເຊັ່ນ: ໄມ້ແຄນ, ໄມ້ໝາກຂາມ,ໄມ້ແຄ,ໄມ້ໝາກໄຮ, ກະຖິນນະລົງ ແລະໄມ້ໝາກມີ້.

**3. ອາຍຸໄມ້ທີ່ເໝາະສົມ**

ເສັ້ນຜ່າສູນກາງມີຂະໜາດ 12 ຊມ ຂຶ້ນໄປ.

**4. ການເຈາະໄມ້ ເພື່ອໃສ່ຫົວເຊື້ອ ແລະ ປິດຮູ ບ່ອນໃສ່ຫົວເຊື້ອ.**

ຫຼັງຈາກໃສ່ຫົວເຊື້ອເຫັດລົງໃນຮູທ່ອນໄມ້ເຕັມແລ້ວ ໃຫ້ເອົາຂີ້ເຜີ້ງອັດຮູເຊື້ອເຫັດ ຫຼື ໃຊ້ງ່າໄມ້ນ້ອຍຕັດອັດໃສ່ຮູທີ່ປ່ອຍເຊື້ອເຫັດໃສ່ນັ້ນ ແລ້ວໃຊ້ມີດ ຫຼື ແມງໄມ້ເຂົ້າໄປກັດກິນເຊື້ອເຫັດໄດ້.




ຊາມໃສ່ຫົວເຊື້ອ



**5. ການວາງທ່ອນໄມ້, ການເບິ່ງແຍງຮັກສາທ່ອນໄມ້**

ນຳເອົາທ່ອນໄມ້ທີ່ປ່ອຍເຊື້ອໄປແລ້ວນັ້ນໄປເກັບໄວ້ສະຖານທີ່ຮົ່ມ ບ່ອນທີ່ມີອາກາດປອດປົ່ງດີ, ໂດຍເຮັດເປັນຄອກມີຮົ່ມ, ລຽນທ່ອນໄມ້ແບບກອງນອນ ແລະ ລຽນກອງກັນໄວ້ປະມານ 10 — 12 ວັນ ໃຫ້ປີ້ນທ່ອນໄມ້ເທື່ອນຶ່ງ ເຮັດແບບນີ້ເປັນປະຈຳຈົນຮອດ 45 ວັນ, ເພື່ອກະຕຸ້ນການຈະເລີນເຕີບໂຕຂອງເສັ້ນໄຍ.ຖ້າກໍລະນີເປັນໄມ້ເນື້ອອ່ອນ 4 ຫາ 6 ອາທິດ ເສັ້ນໄຍກໍ່ຈະຈະເລີນທົ່ວທ່ອນໄມ້, ເມື່ອສັງເກດເຫັນເສັ້ນໄຍເຫັດ ປ່ຽນເປັນສີນ້ຳຕານເຂັ້ມ ສະແດງວ່າເສັ້ນໄຍຈະເລີນເຕີບໂຕທົ່ວທ່ອນໄມ້ ພ້ອມທີ່ຈະນຳໄປກະຕຸ້ນໃຫ້ເສັ້ນໄຍຂອງເຫັດລວມຕົວກັນເປັນດອກໂດຍນຳເອົາທ່ອນໄມ້ໄປແຊ່ນ້ຳ, ຄວນສັງເກດອຸນນະພູມຂອງນ້ຳໃຫ້ຢູ່ລະຫວ່າງ 10 ອົງສາ ຈະຊ່ວຍໃຫ້ເສັ້ນໄຍເກີດດອກໄວ.

- ການແຊ່ທ່ອນໄມ້: ຄວນໃຫ້ນ້ຳສະອາດ ແຊ່ໄວ້ 24 ຊົ່ວໂມງ, ຫຼັງຈາກແຊ່ແລ້ວກ່ອນຈະນຳອົາທ່ອນໄມ້ໄປໃສ່ເຮືອນປູກເພື່ອໃຫ້ເກີດດອກ, ຄວນໃຊ້ຄ້ອນທຸບທົ່ວທ່ອນໄມ້ເພື່ອກະຕຸ້ນໃຫ້ເກີດດອກໄດ້ໄວຂຶ້ນ.
- ການວາງທ່ອນໄມ້: ຄວນກ່າຍທ່ອນໄມ້ໃຫ້ໄດ້ມູມງ່ຽງ 45 ອົງສາ ແລ້ວ ຫົດນ້ຳທ່ອນໄມ້ໃຫ້ໄດ້ທຸກໆ ມື້ ມື້ລະ 2 — 3 ຄັ້ງ ແລະ ໃຫ້ຄວາມຊຸ່ມໃນເຮືອນປູກ ມີປະມານ 80 — 85 % ຈາກນັ້ນປະມານ 5— 10 ວັນດອກເຫັດກໍ່ຈະເກີດອອກມາ.

✥ ການວາງທ່ອນໄມ້ແບບຄອກໝູ





**6. ການເກັບດອກເຫັດ**

ເມື່ອເຫັດອອກດອກເຕີບໂຕພໍທີ່ຈະເກັບໃຫ້ໃຊ້ມືຈັບເທົ້ງາເຫັດໃຫ້ແໜ້ນ ໝູນໄປມາ, ໃຊ້ແຮງດຶງໜ້ອຍນຶ່ງດອກເຫັດຈະຫຼຸດອອກມາງ່າຍດາຍ. ຫຼັງຈາກເກັບດອກເຫັດແລ້ວປະມານ 10 — 15 ມື້ ດອກໃໝ່ກໍ່ຈະເກີດຂຶ້ນຕື່ມອີກ ແລະ ສາມາດເກັບດອກເຫັດໄດ້ຈົນກວ່າໄມ້ຈະໂດກ.

✥ ດອກເຫັດທີ່ເກີດນຳທ່ອນໄມ້



✥ ລັກສະນະເຮືອນປູກເຫັດ

— ມຸງດ້ວຍຫຍ້າ, ແອ້ມດ້ວຍຝາໄມ້ເຮ້ຍ

— ໂຮງເຮືອນຄວນເກັບຄວາມຊຸ່ມໄວ້ໄດ້ດີ



✥ ການວາງທ່ອນໄມ້ ເພື່ອທຶດນ້ຳໃຫ້ເກີດດອກ



## 7. ຄຸນປະໂຫຍດຂອງເຫັດ

- ເຫັດມີໂປຼຕີນຂ້ອນຂ້າງສູງ ໃນເຫັດມີທາດອາຫານຢູ່ 2 — 4 % , ເຫັດແຫ້ງມີ 20 — 40 % ສົມທຽບຄືກັນກັບໂປຼຕີນໃນຖົ່ວເຫຼືອງ ຮັບປະທານ 2 — 3 ຊະນິດເຫັດລວມກັນຈະມີໂປຼຕີນທີ່ມີຄຸນຄ່າ ເຮັດໃຫ້ຮ່າງກາຍແຂງແຮງ.
- ເຫັດຊ່ວຍເສີມຄວາມງາມ ເພາະເຫັດມີໄຂມັນໜ້ອຍບໍ່ເກີນ 0,5 % .
- ເຫັດເປັນທາດອາຫານເສີມສຸຂະພາບທີ່ກິນແຊບ, ມີລາຄາຖືກ ປັດສະຈາກສານຕົກຄ້າງ ເປັນອາຫານທີ່ບໍ່ຕ້ອງບຽດບຽນຊີວິດຂອງຜູ້ອື່ນ.
- ເຫັດໃຫ້ຄວາມປອດໄພຊ່ວຍຕ້ານທານໂຣກຕ່າງໆ ລວມທັງໂຣກມະເລັງ ຊ່ວຍສ້າງພູມຄຸ້ມກັນໃຫ້ຮ່າງກາຍຕະຫຼອດເວລາ.

Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ

ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ວິທີປູກເຫັດໃສ່ທ່ອນໄມ້



ຂຽນໂດຍ: ໜ່ວຍງານສົ່ງເສີມວິຊາຊີບ

ໂທລະສັບ/ແຟກ: (021) 740252

ສະໜັບສະໜູນໂດຍ: ໂຄງການ ສົ່ງເສີມ ກະສິກຳ (*LEAP*)